# ບົດຮຽນໂຮງຮຽນວັນອາທິດ

ວັນອາທິດ ທີ 3 ກັນຍາ 2023 (09-03-2023)

---

## ສ້າງຄວາມເຊື່ອໝັ້ນທີ່ເຂັ້ມແຂງ

**ຈຸດສຳຄັນໃນບົດຮຽນ:** ຄວາມເຊື່ອໝັ້ນຂອງພວກເຮົາ, ບໍ່ແມ່ນສະພາບການ, ທີ່ກຳນົດວ່າເຮົາເປັນໃຜ.

**ພຣະຄັມພີຕອບສນອງຕໍ່ຊີວິດ:**

ເປັນຫຍັງຂ້າພະເຈົ້າຈຶ່ງບໍ່ສາມາດມີໂຕມັງກອນເປັນສັດລ້ຽງຢູ່ກ້ອງຂັ້ນໄດ? ເອັດດີ ມັນສະເຕີ (Eddy Munster) ເຄີຍມີໂຕນຶ່ງ. ຂັ້ນໄດຂອງ ມັນສະເຕີ ໄດ້ເປີດຄືກັນກັບເປີດຝາປົກຈັກຣົດ, ແລະຈຸດປາກົດນັ້ນ, ປົກກະຕິແລ້ວມີໄຟພຸ່ງອອກເປັນລົມທັນໃຈ. ຂັ້ນຕອນອັນແທ້ຈິງທີ່ກີດກັນຂ້າພະເຈົ້າບໍ່ໃຫ້ມີໂຕມັງກອນ. ນຶ່ງ, ຂ້ອຍຈະໄປຫາຢູ່ໃສ? ຮ້ານຂາຍສັດລ້ຽງກໍຂາຍແຕ່ປາຄຳແລະໜູສະເພົາ-ບໍ່ມີມັງກອນເລີຍ. ສອງ, ອາຫານຂອງມັນອາດແພງເກີນກວ່າເຮົາຈະຊື້ໄດ້. ສາມ, ພວກເຮົາຢູ່ເຮືອນຊັ້ນດຽວຊຶ່ງບໍ່ມີຂັ້ນໄດໃຫຍ່ພໍ.

ບາງເທື່ອພວກເຮົາແນມເບິ່ງໂລກເຮົາທຸກວັນນີ້ແລ້ວວ່າ, “ນີ້ບໍ່ແມ່ນໂລກທີ່ຂ້ອຍເຄີຍຮູ້ຈັກ! ມີບາງສິ່ງຜິດພາດຢ່າງໃຫຍ່ທີ່ນີ້.” ຜູ້ທຳນວາຍ ທ່ານດານີເອນໃນພຣະຄັມພີເດີມຖືກນຳໄປຢູ່ຕ່າງຖິ່ນແລະບ່ອນທີ່ບໍ່ເຊື່ອພຣະເຈົ້າ. ຕົວຢ່າງຂອງລາວສາມາດຊ່ວຍສອນເຮົາຄືກັນວ່າຈະສາມາດໃຊ້ຊີວິດຢ່າງໝັ້ນຄົງໃນໂລກທີ່ຄ້າຍຄືກັນນີ້ໄດ້ຢ່າງໃດ.

*ເມື່ອໃດທີ່ທ່ານໄດ້ພົບກັບວັທນາທັມທີ່ເຮັດໃຫ້ທ້ໍໃຈວາຍ?*

**ພຣະຄັມພີກ່າວວ່າແນວໃດ:** (ເບິ່ງຕາມຂໍ້ 1, 2, ແລະ 3,)

### ການສຶກສາພຣະຄັມພີ

### 1. <u>ດານີເອນ 1:3-7.</u>

*3ພຣະອົງໄດ້ຊົງສັ່ງໃຫ້ ອັດຊະເປນັດ ຫົວໜ້າພະນັກງານເລືອກເອົາພວກຊະເລີຍອິສຣາເອນທີ່ເປັນຄົນໜຸ່ມບາງຄົນ ຊຶ່ງເປັນເຊື້ອພະວົງ*
*ແລະເຊື້ອສາຍເຈົ້ານາຍ. 4ຄົນເຫຼົ່ານີ້ຈະຕ້ອງເປັນຜູ້ງາມມີສຸຂະພາບສົມບູນມີຄວາມສະຫຼາດໄດ້ຮັບການຝຶກຝົນເປັນຢ່າງດີແລະມີປັນຍາ*
*ຫຼັກແຫຼມເພື່ອວ່າພວກເຂົາຈະໄດ້ມີຄຸນສົມບັດເຂົ້າຮັບໃຊ້ໃນພຣະຣາຊສຳນັກ ອັດຊະເປນັດຈະເປັນຜູ້ສອນໃຫ້ພວກເຂົາອ່ານແລະຂຽນ*
*ພາສາບາບີໂລນໄດ້. 5ພຣະຣາຊາຊົງສັ່ງໃຫ້ນຳເອົາອາຫານແລະເຫຼົ້າອະງຸ່ນທີ່ພຣະອົງຊົງສເວີຍ ມາໃຫ້ພວກເຂົາກິນດື່ມທຸກມື້ ໃຫ້ລ້ຽງ*
*ດູພວກເຂົາຢູ່ເປັນເວລາສາມປີ ແລ້ວພວກເຂົາຈຶ່ງຈະຖືກນຳເຂົ້າເຝົ້າພຣະຣາຊາ. 6ໃນບັນດາຄົນທີ່ຖືກຄັດເລືອກເຫຼົ່ານີ້ມີຊາວຢູດາຢູ່ນຳ*
*ຄືດານີເອນ ຮານານີຢາ ມີຊາເອນ ແລະອາຊາຣີຢາ. 7ຫົວໜ້າພະນັກງານໄດ້ເອີ້ນຊື່ພວກເຂົາໃໝ່ດັ່ງນີ້ ດານີເອນ ເອີ້ນວ່າເບນເຕຊັດ-*
*ຊາເຣ ຮານານີຢາ ເອີ້ນວ່າ ຊັດຣັກ ມີຊາເອນ ເອີ້ນວ່າ ເມຊາກ ແລະ ອາຊາຣີຢາ ເອີ້ນວ່າ ອາເບດເນໂກ.*

ພຣະທັມ ດານີເອນໄດ້ກາຍເປັນຊີວະປວັດ ແລະ ພາບຖ່າຍຈາກຊີວິດຂອງຜູ້ທຳນວາຍດານີເອນ. ບາບີໂລນໄດ້ປົກຄອງຄວບຄຸມອັດຊີເຣັຽໃນປີ 605 ກ່ອນ ຄສ (BC). ຊົນຊາດຢູດາ ພາຍລຸນມາໄດ້ພົບວ່າຕົນເອງຕົກຢູ່ພາຍໃຕ້ການຄວບຄຸມຂອງບາບີໂລນ. ທ່າທີທຳອິດຂອງເນບູກາເນັດຊາ ກະສັດບາບີໂລນ ຄືໄດ້ຈັບຊາວຢູດາອອກຈາກເຢຣູຊາເລັມ, ເມືອງຫຼວງຂອງຢູດາ, ແລະໄດ້ນຳເຂົາມາຢູ່ໃນພຣະຣາຊວັງ. ດານີເອນມີອາຍຸປະມານສິບຫ້າປີໃນເວລານັ້ນ, ເປັນຄົນນຶ່ງໃນບັນດາຊະເລີຍ.

- **ຄົນດີແລະສລາດທີ່ສຸດ.** ກະສັດເນບູກາເນັດຊາ ໄດ້ຣະບຸຊະເລີຍເຮັບເຣີຊຶ່ງເປັນເຊື້ອພຣະວົງຫຼືມາຈາກຄອບຄົວເຈົ້ານາຍ ເພື່ອເອົາມາເປັນຄົນໃນພຣະຣາຊວັງ. ບໍ່ວ່າດານີເອນແລະເພື່ອນຂອງລາວຈະເປັນເຊື້ອພຣະວົງຫຼືເປັນຄົນຈາກຄອບຄົວເຈົ້ານາຍແຫ່ງຢູດາກໍບໍ່ຊາບໄດ້. ຄົນຈາກສັງຄົມຊົນຊັ້ນນີ້ ຕ້ອງໄດ້ຮັບການສຶກສາທີ່ດີ ແລະໄດ້ຮັບການອົບຮົມທາງດ້ານປະເພນີແລະວັທນາທັມເປັນຢ່າງດີ.

ເນບູກາເນັດຊາບໍ່ປະສົງເອົາຄົນມາບາບີໂລນເພື່ອອຸປຖໍາເຂົາແຕ່ຊອກຫາຄົນມາອຸປຖໍາຕົນເອງແລະເປັນກໍາລັງແຮງໃຫ້ອານາຈັກຂອງເພິ່ນມີອໍານາດ, ມີອິດທິພົນ ແລະມີຊື່ສຽງ. ນອກຈາກນັ້ນ ການນໍາເອົາອິດທິພົນທີ່ເຂັ້ມແຂງທີ່ສຸດມາໃຫ້ບາບີໂລນຈະເຮັດໃຫ້ຢູດາອ່ອນແອ, ຊຶ່ງອາດມີຄວາມສ່ຽງຕໍ່ການໂຈມຕີຕະລົບຄືນໃນອານາຄົດ.

ສິ່ງທີ່ເນບູກາເນັດຊາຄິດບໍ່ເຖິງ ແມ່ນພື້ນຖານດ້ານສາສນາທີ່ຝັງຮາກຢູ່ໃນຊີວິດຂອງຊະເລີຍບາງຄົນ, ທີ່ຊື່ດານີເອນແລະເພື່ອນຊາວເຮັບເຣີສາມຄົນ. ເຂົາເຕີບໃຫຍ່ຂຶ້ນມາພາຍໃຕ້ອິດທິພົນຂອງກະສັດຢູດາຊື່ໂຢຊີຢາ ຜູ້ທີ່ເຊື່ອພຣະເຈົ້າ. ການຄອງຣາດຂອງພຣະອົງ (640-609 ກ່ອນ ຄສ) ໄດ້ເປັນບ່ອນຂີດໝາຍຈາກຄົນຂອງພຣະເຈົ້າເພື່ອທົບທວນຄໍາສັນຍາຂອງພຣະອົງຄືນໃໝ່, ການຟື້ນຟູທົ່ວປະເທດ, ແລະພຣະທັມຂອງພຣະເຈົ້າໄດ້ຖືກຈັດໃຫ້ເປັນໃຈກາງສໍາລັບການນະມັສການຂອງຊາວເຮັບເຣີ. ເຖິງແມ່ນວ່າ ບໍ່ໄດ້ກ່າວໄວ້ໃນພຣະຄັມພີ, ການເຝົ້າດູ່ງອພຣະເຈົ້າແລະພຣະທັມພຣະອົງແນ່ນອນໄດ້ເລີ້ມເປັນຂັ້ນຕອນທີ່ພໍ່ແມ່ຂອງເຂົາໄດ້ວາງໄວ້.

ນີ້ແມ່ນການເຕືອນສະຕິພວກເຮົາໃນວັນນີ້ເພື່ອໃຫ້ແນ່ໃຈວ່າ ພວກເຮົາລ້ຽງດູລູກຂອງເຮົາໃນສະພາບແວດລ້ອມທີ່ຖວາຍກຽດພຣະເຈົ້າແລະພຣະທັມພຣະອົງ. ພື້ນຖານຄວາມເຊື່ອພຣະເຈົ້າບໍ່ສາມາດປະຖິ້ມໄດ້ງ່າຍໆ. ທ່ານໂປໂລໄດ້ເຕືອນຕີໂມທຽວເຖິງຜົນດີທີ່ຖືກລ້ຽງດູໃນຄອບຄົວຄົນທີ່ຢໍາເກງພຣະເຈົ້າວ່າ:*"ເຮົາລະນຶກເຖິງຄວາມເຊື່ອອັນຈິງໃຈຂອງເຈົ້າ ອັນເປັນຄວາມເຊື່ອຊຶ່ງເມື່ອກ່ອນໄດ້ມີຢູ່ໃນນາງ ໂລອີ ແມ່ເຖົ້າຂອງເຈົ້າ, ແລະໃນນາງ ຢູນີເກແມ່ຂອງເຈົ້າ ບັດນີ້ເຮົາເຊື່ອແນ່ວ່າມີຢູ່ໃນເຈົ້າເໝືອນກັນ (2 ຕມທ 1:5).* ຄວາມຕັ້ງໃຈແລະຄວາມຈົງຮັກພັກດີຕໍ່ພຣະເຈົ້າຂອງດານີເອນແລະເພື່ອນເຄີຍຍຶດຖືມາຕັ້ງແຕ່ຄາວຢູ່ປະເທດຊາດຢ່າງເຄັ່ງຂັດໄດ້ກາຍເປັນຫຼັກຖານໃນບາບີໂລນ.

- **ການອົບຮົມແລະການສອນ.** ເຫດໃດ ເນບູກາເນັດຊາ ຈຶ່ງກໍານົດໃຫ້ມີການຝຶກອົບຮົມຊະເລີຍ "ໃນດ້ານປັນຍາ, ຄວາມຮູ້,…ພາສາ ຊາດີນ(Chaldean)ແລະວັນນະຄະດີ"? ກະສັດອາດຢາກລຶບລ້າງຄວາມເຊື່ອແລະວັທນາທັມທີ່ເຂົາຮູ້ໃນຢູດາອອກຈາກຄວາມຄິດຂອງເຂົາ. ໄດ້ປ່ຽນຊື່ເຮັບເຣີຂອງເຂົາແຕ່ລະຄົນທີ່ສະທ້ອນຄວາມເຊື່ອຂອງພໍ່ແມ່ເຂົາໃນພຣະເຈົ້າ, ມາເປັນຊື່ທີ່ໃຫ້ກຽດພະຕ່າງໆຂອງບາບີໂລນ ເນັ້ນຄວາມພະຍາຍາມຂອງ ເນບູກາເນັດຊາເພື່ອລຶບລ້າງພື້ນຖານຄວາມຢໍາເກງພຣະເຈົ້າຂອງເຂົາ. ຫຼືວ່າ ເນບູກາເນັດຊາໄດ້ຈັດຕຽມຄົນໜຸ່ມເຫຼົ່ານີ້ເພື່ອວຽກງານອານາຄົດໃນບາບີໂລນ, ເປັນທີ່ຊາບດີວ່າ ເຂົາອາດຖືກຈັດຕຽມໄວ້ເພື່ອອົບຮົມຊະເລີຍຄົນອື່ນໆທີ່ຈະຖືກຈັບມາບາບີໂລນໃນພາຍໜ້າ. ເພື່ອປັບຕົວຄົນໜຸ່ມໃຫ້ເຂົ້າສູ່ຊີວິດຊາວບາບີໂລນແລະອາດເຂົ້າຮັບໃຊ້ໃນພຣະຣາຊສໍານັກ. ກະສັດເນບູກາເນັດຊາ ຊົງສັ່ງໃຫ້ເອົາອາຫານແລະເຫລົ້າອະງຸ່ນທີ່ກະສັດຊົງສເວີຍມາໃຫ້ພວກເຂົາກິນດື່ມທຸກມື້. ກະສັດປະສົງໃຫ້ແນ່ໃຈວ່າຄົນໜຸ່ມເຫຼົ່ານີ້ໄດ້ຮັບສິ່ງທີ່ດີເທົ່າທີ່ສາມາດຈັດຫາໃຫ້ໄດ້ ບໍ່ວ່າທາງດ້ານອາຫານ, ການສຶກສາ, ແລະການໃຫ້ຄໍາປຶກສາ.

ປະສົບການຂອງວັຍໜຸ່ມຊາວເຮັບເຣີໃນການຮັບໃຊ້ຊາວບາບີໂລນ ໃຊ້ເປັນອຸທາຫອນສໍາລັບພວກເຮົາໃນທຸກວັນນີ້. ເມື່ອວັທນາທັມທັນສມັຍກ້າວໄປຂ້າງໜ້າຈາກປະເພນີການເຄົາຣົບພຣະເຈົ້າ, ໂລກຈະຄາດຫວັງໃຫ້ຄົນທີ່ເຊື່ອລະຖິ້ມຄວາມສັດຊື່ຕໍ່ພຣະເຈົ້າເພີ່ມຂຶ້ນ. ເຂົາຈະກົດດັນໃຫ້ພວກເຮົາຍອມຮັບການດໍາເນີນທີ່ຝ່າຝືນພຣະທັມພຣະເຈົ້າ. ພວກເຮົາຈະຍຶດໝັ້ນໃນຄວາມເຊື່ອ ເໝືອນດັ່ງ ດານີເອນ ແລະເພື່ອນຂອງລາວບໍ່?

*ໃນບ່ອນໃດແດ່ທີ່ທ່ານພົບເຫັນທັສນະຄຣິສະຕຽນຂອງທ່ານໄດ້ຮັບການທ້າທາຍໃນທຸກວັນນີ້?*

## 2. ດານີເອນ 1:8-13.

*8 ດານີເອນ ໄດ້ຕັດສິນໃຈວ່າຈະບໍ່ເຮັດຜິດພຣະເຈົ້າຍ້ອນອາຫານແລະນໍ້າອະງຸ່ນຂອງພຣະຣາຊາ ເພິ່ນໄດ້ຂໍຮ້ອງ ອັດຊະເປນັດຜູ້ເປັນ
ຫົວໜ້າພະນັກງານໃຫ້ຊ່ອຍເຫລືອຕົນ. 9 ພຣະເຈົ້າຈຶ່ງຊົງເຮັດໃຫ້ ອັດຊະເປນັດ ມີເມດຕາຈິດແລະສົງສານ ດານີເອນ. 10 ແຕ່ອັດຊະ-
ເປນັດບອກ ດານີເອນ ວ່າ, "ຂ້ອຍຢ້ານພຣະຣາຊາ ພຣະອົງຊົງສັ່ງໃຫ້ເຈົ້າກິນ ແລະດື່ມຂອງເຫຼົ່ານີ້ ຖ້າເຈົ້າບໍ່ຕູ້ຍພີເໝືອນຄົນໜຸ່ມ
ອື່ນໆ ພຣະອົງອາດຈະຊົງສັ່ງປະຫານຊີວິດຂ້ອຍກໍໄດ້." 11 ດັ່ງນັ້ນ ດານີເອນ ຈຶ່ງໄປຫາຄົນຍາມທີ່ ອັດຊະເປນັດ ແຕ່ງໃຫ້ຄວບຄຸມ
ຕົນ ກັບໝູ່ອີກສາມຄົນນັ້ນ. 12 ເພິ່ນເວົ້າວ່າ, "ຂໍໃຫ້ພວກຂ້ານ້ອຍກິນແຕ່ຜັກກັບນໍ້າລ້າໆລອງເບິ່ງຈັກສິບມື້. 13 ໃຫ້ທ່ານສັງເກດເບິ່ງພວກ*

*ຂ້ານ້ອຍກັບຄົນໜຸ່ມທີ່ກິນອາຫານຂອງພຣະຣາຊາແລ້ວທ່ານຈຶ່ງຕັດສິນໃຈຕາມທີ່ເຫັນສົມຄວນ.”*

ພັລຍາແລະຂ້າພະເຈົ້າມີເພື່ອນຊື່ແຄເຣັນ ຕອນຍັງນ້ອຍລາວໄດ້ສມັກເມື່ອດື່ມນ້ຳໝາກນາວ. ທຸກວັນນີ້ແຄເຣັນລະມັດລະວັງເປັນພິເສດເວລາສັ່ງເຄື່ອງດື່ມທີ່ຮ້ານອາຫານ. ມີຫຼາຍເທື່ອພວກເຮົາໄດ້ຍິນລາວເວົ້າວ່າ, “ຂ້ອຍຢາກໄດ້ນ້ຳຊາຈອກນຶ່ງບໍ່ໃສ່ໝາກນາວ, ແລະເມື່ອຂ້າພະເຈົ້າເວົ້າວ່າ ‘ບໍ່ມີໝາກນາວ,’ ຂ້າພະເຈົ້າໝາຍຄວາມວ່າບໍ່ມີໝາກນາວ. ເຈົ້າບໍ່ສາມາດເອົາຈອກທີ່ມີປ່ຽງໝາກນາວເກາະຢູ່ຂ້າງແລ້ວກໍເອົາປ່ຽງໝາກນາວນັ້ນອອກ. ຂ້ອຍແພ້ຢ່າງຕາຍເລີຍ. ສະນັ້ນ ບໍ່ມີໝາກນາວເລີຍ.” ເມື່ອໄດ້ຍິນສຽງເຕືອນຂອງລາວ, ພວກບໍຣິການກໍເຂົ້າໃຈດີສເມີ.

- **ການຕັດສິນໃຈແລະມົນທິນ.** ດານີເອນແລະເພື່ອນຂອງລາວໄດ້ຍິນວ່າເຂົາຈະໄດ້ຮັບອາຫານແລະເຫຼົ້າອະງຸ່ນດັ່ງດຽວກັບພຣະຣາຊາໄດ້ຮັບ (ດນອ 1:5**).** ນີ້ແນ່ນອນວ່າເປັນເຮືອນຄົວທີ່ດີທີ່ສຸດໃນແຜ່ນດິນ, ປຸງແຕ່ງໂດຍພໍ່ຄົວທີ່ມີສີມືພິເສດທີ່ສຸດ. ແທນທີ່ຈະເປັນທີ່ຍິນດີແລະພໍໃຈ, ແຕ່ວ່າ, ສຽງເຕືອນພັຍດັງຂຶ້ນ; ດານີເອນເຫັນວ່າເປັນມົນທິນແກ່ລາວ? ເຫດສອງຢ່າງອາດເກີດຂຶ້ນ.

1. ດານີເອນຖືກລ້ຽງມາໃນຄອບຄົວຂອງຊາວຢິວ, ຄົງເຂົ້າໃຈວ່າອາຫານບາງຢ່າງບໍ່ສະອາດ ແລະສັດບາງຊນິດສະອາດ ແລະບາງຊນິດ “ບໍ່ສະອາດ”(ປຖກ 7).
2. ສາສນານອກຮີດບູຮານມັກຖືກບັງຄັບໃຫ້ວາງອາຫານໄວ້ຕໍ່ໜ້າຮູບປັ້ນ. ຫຼັງຈາກນັ້ນມັນກໍຈະຖືກນຳໄປຖວາຍແກ່ພະ, ປະໂຣຫິດຫຼືພວກຜູ້ນຳກໍຈະກິນ. ເມື່ອພຣະຈົ້າໄດ້ໃຫ້ພຣະບັນຍັດແກ່ໂມເຊ, ພຣະອົງໄດ້ສັ່ງຫ້າມບໍ່ໃຫ້ຮັບປະທານອາຫານທີ່ໄດ້ຖວາຍແກ່ພຣະທຽມແລ້ວ(ອພຍ 34:15).

ດານີເອນໄດ້ຢືນຢັດຢ່າງໜັກແໜ້ນຕໍ່ຄວາມໝັ້ນໃຈເຣື່ອງສາສນາຂອງລາວ. ເຖິງແມ່ນລາວໄດ້ຮັບຄວາມເມດຕາຕໍ່ການຮ້ອງຂໍຂອງລາວແລ້ວກໍຕາມ, “ລາວໄດ້ຮ້ອງຂໍອະນຸຍາດ,” ລາວໄດ້ຕັດສິນໃຈໃນໃຈແລ້ວວ່າ ລາວຈະບໍ່ກິນອາຫານພຣະຣາຊາ. ການແກ້ໄຂບັນຫາຂອງດານີເອນເປັນບົດຮຽນສຳລັບພວກເຮົາ. ພວກເຮົາຕ້ອງກໍ່ຕັ້ງໃຈສຳນຶກຜິດແລະຂອບຂອງເຮົາຕໍ່ພຶດຕິກັມທີ່ບໍ່ບໍຣິສຸດ, ການປະນີປະນອມ, ແລະ/ຫຼື ບ່ອນທີ່ບໍ່ສາມາດຍອມຮັບໄດ້<u>*ກ່ອນ*</u> ທີ່ພວກເຮົາຈະປະເຊີນກັບການຕັດສິນໃຈ.

- **ເວລາແຫ່ງການທົດສອບ.** ການປະຕິເສດອາຫານຂອງພຣະຣາຊາອາດເປັນການປະຕິເສດພຣະຣາຊາເອງແລະເປັນການກະບົດ.

ຫົວໜ້າຄົນຮັບໃຊ້ໄດ້ປະຕິເສດຄວາມຄິດນີ້. ລາວຢ້ານວ່າຄົນໜຸ່ມອາດບໍ່ຕຸ້ຍທໍ່ຄົນອື່ນ ແລ້ວຊີວິດຂອງລາວກໍຈະຕົກຢູ່ໃນອັນຕະລາຍ. ດານີເອນບໍ່ຍອມຢັບຢັ້ງດ້ວຍການປະຕິເສດຂອງຄົນຮັບໃຊ້, ຕໍ່ຈາກນັ້ນລາວໄດ້ເຂົ້າຫານາຍຄຸມທີ່ຖືກແຕ່ງຕັ້ງໃຫ້ຄຸມລາວ. ເມື່ອໄດ້ຍິນຄຳຂໍຮ້ອງຂອງດານີເອນ, ລາວໄດ້ຕົກລົງລ້ຽງດານີເອນແລະເພື່ອນຂອງລາວດ້ວຍຜັກແລະນ້ຳເປັນເວລາສິບວັນ. ພາສາເຮັບເຣີແປຄຳວ່າ “ຜັກ” ໝາຍເຖິງການໄດ້ຮັບໝາກໄມ້ແລະສິ່ງອື່ນທີ່ບໍ່ມີຊີ້ນ. ຫຼັງຈາກນັ້ນ, ນາຍຄຸມຕ້ອງໄດ້ກວດກາເບິ່ງສະພາບຂອງຄົນໜຸ່ມນັ້ນ. ການຕັ້ງ “ແຜນ2” ບົ່ງບອກເຖິງການຫຼີກເວັ້ນການເປັນມົນທິນຂອງດານີເອນ. ບໍ່ແປກໃຈເລີຍເມື່ອຜ່ານໄປຫຼາຍວັນຄົນໜຸ່ມມີຮູບຮ່າງແຂງແຮງດີຫຼັງຈາກສິບວັນ. ເຂົາສືບຕໍ່ໃຫ້ອາຫານຕາມຄຳຂໍຕລອດສາມປີຂອງການຝຶກອົບຮົມທັງໝົດ. ຖ້າຄົນໜຸ່ມນ້ອຍຊາວເຮັບເຣີໄດ້ກິນອາຫານຈາກໂຕະຂອງພຣະຣາຊາແລະຫຼັງຈາກນັ້ນປາກົດວ່າກ້າວກຶດ, ລ້ຳສັນ, ແລະແຂງແຮງດີ, ຫຼັງຈາກນັ້ນ ສະພາບຂອງເຂົາກໍຈະເປັນໄປຕາມສິ່ງທີ່ຊາວບາບີໂລນຈັດຫາໃຫ້. ຖ້າວ່າເຂົາຢູ່ໃນສະພາບສຸຂພາບດີຄືກັນຫຼັງຈາກໄດ້ກິນອາຫານຫຼຸດຜ່ອນແລະປັບປຸງ, ແລ້ວຜົນຮັບກໍຄວນເປັນຜົນໄປຕາມສິ່ງພຣະເຈົ້າໄດ້ຊົງກະທຳ.

*ພວກເຮົາຈະຂັບເຄື່ອນຄວາມເຄັ່ງຕຶງຣະຫວ່າງຍຶດໝັ້ນໃນຄວາມເຊື່ອແລະບໍ່ແຍກຕົວເຮົາຈາກໂລກຢ່າງໃດ?*

## 3. <u>ດານີເອນ 1:17-19.</u>

*[17]ພຣະເຈົ້າໄດ້ຊົງປະທານໃຫ້ພວກຄົນໜຸ່ມສີ່ຄົນນີ້ ມີຄວາມຮູ້ ມີຄວາມຊຳນິຊຳນານໃນວັນນະຄະດີແລະປຣັຊຍາ ເປັນຢ່າງດີ ພຣະອົງຊົງໂຜດໃຫ້ດານີເອນຊຳນານການແປນິມິດແລະແກ້ຄວາມຝັນ. [18]ເມື່ອຄົບຖ້ວນກຳນົດສາມປີທີ່ພຣະຣາຊາຊົງກຳນົດໄວ້ ອັດຊະເປນັດກໍນຳຄົນໜຸ່ມທັງໝົດເຂົ້າເຝົ້າກະສັດ ເນບູກາດເນັດຊາ. [19]ພຣະອົງຊົງສົນທະນາກັບພວກເຂົາກໍຊົງເຫັນວ່າ ດານີເອນ ຮານານີຢາ*

*ມີຊາເອນ ແລະ ອາຊາຣີຢາ ສະຫຼາດກວ່າຄົນອື່ນໆ ດັ່ງນັ້ນ ພວກເຂົາຈຶ່ງໄດ້ເຂົ້າຮັບຣາຊການໃນພຣະຣາຊສຳນັກ.*

ດານີເອນແລະເພື່ອນຊາວເຮັບເຣີຂອງລາວໄດ້ຖືກຈັບໄປເປັນຊະເລີຍ, ເຂົາມີເຫດຜົນທີ່ຈະຖາມພຣະເຈົ້າແລະແປກໃຈວ່າເຫດໃດພຣະອົງຈຶ່ງປະປ່ອຍເຂົາໄປຕາມບັນຫາການປຸ່ນແປງເຫຼົ່ານັ້ນ. ເຖິງຢ່າງໃດກໍຕາມ, ດານີເອນນຶກສເນີວ່າພຣະເຈົ້າຍັງຊົງທຳພຣະຣາຊກິດຂອງພຣະອົງຢູ່, ແມ້ກະທັ້ງ ໃນສະຖານະການທີ່ເຂົາຖືກກົດຂີ່ຂົ່ມເຫັງເຊັ່ນນີ້.

- **ສະຕິປັນຍາແລະສາຍຕາ.** ແທນທີ່ພຽງແຕ່ໄດ້ຮັບຂໍ້ມູນ(ຄວາມຮູ້), ຊາຍໜຸ່ມທັງສີ່ຍັງໄດ້ຮັບສາຍຕາພາຍໃນ(ຄວາມເຂົ້າໃຈ)ທີ່ເກີນປົກກະຕິ, ເກີນຄວາມສາມາດຂອງມະນຸດ. ເຂົາໄດ້ຮັບສະຕິປັນຍາແລະຄວາມເຂົ້າໃຈທີ່ມາຈາກພຣະເຈົ້າເທົ່ານັ້ນ.

*ມີຫຍັງແດ່ທີ່ຈະຊ່ອຍເຮົາຍຶດໝັ້ນໃນຄວາມເຊື່ອຂອງເຮົາ?*

ນອກຈາກສະຕິປັນຍາ, ພຣະເຈົ້າຍັງໄດ້ປະທານໃຫ້ດານີເອນຢ່າງນຶ່ງທີ່ພຣະອົງບໍ່ໄດ້ໃຫ້ເພື່ອນຂອງລາວສາມຄົນ-ຄວາມສາມາດໃນການແປນິມິດແລະຄວາມຝັນທຸກປະເພດ. ຊາວບາບີໂລນເຊື່ອວ່າພະຂອງເຂົາສົ່ງຂ່າວທາງຄວາມຝັນ. ຄວາມສາມາດແປຄວາມຝັນຂອງດານີເອນເໜືອກວ່າປະໂລຫິດ, ໝໍດູ, ໝໍຜີ, ແລະໝໍມົນ(ດນອ 2:1-48). ຄວາມສາມາດຂອງພຣະເຈົ້າປະທານແກ່ດານີເອນໃຫ້ເຂົ້າໃຈນິມິດແລະຄວາມຝັນທຸກປະເພດພິສູດຄວາມສູງສົ່ງຂອງພຣະເຈົ້າ, ຢາເວ, ຂອງລາວເໜືອກວ່າພະທຽມຂອງບາບີໂລນ.

- **ຄວາມສູງສົ່ງແລະການຮັບໃຊ້.** ເນບູກາເນັດຊາໄດ້ຮ້ອງຂໍສິ່ງດີທີ່ສຸດແລະສ່ອງໃສທີ່ສຸດໃນການຮັບໃຊ້ຕົນເອງ, ພວກຜູ້ຊາຍທີ່ສາມາດຄວ້າເອົາປັນຍາແລະຄວາມຮູ້ທຸກປະເພດ(ດນອ 1:4). ເວລາເນບູກາເນັດຊາກວດກາຊະເລີຍທຸກຄົນທີ່ໄດ້ຮັບການຝຶກອົບຮົມສາມປີໄດ້ມາເຖິງ. ພຣະຄັມພີບໍ່ໄດ້ບອກວ່າເນບູກາເນັດຊາເຄີຍໄດ້ເຫັນຊະເລີຍຄົນໃດຄົນນຶ່ງບໍ່ກ່ອນຂນະເວລານີ້: ເບິ່ງເໝືອນວ່າບໍ່ເຄີຍ. ພຣະຣາຊາຊາບດີວ່າພຣະອົງຊົງຊອກຫາຫຍັງ.

## ນຳໃຊ້ໃນຊີວິດ

ໃຈສຳນຶກຜິດແລະຊອບຂອງເຮົາ, ບໍ່ແມ່ນສະພາບການ, ທີ່ກຳນົດວ່າເຮົາເປັນໃຜ. ຈົ່ງເລືອກຂໍ້ນຶ່ງຂອງການນຳໃຊ້ໃນຊີວິດຕໍ່ລົງໄປນີ້:

- **ຈົ່ງວິຈັຍສະຖານະການຊີວິດຂອງທ່ານເອງ.** ແມ່ນພຣະເຈົ້າກຳລັງທຳງານໃນທາງທີ່ບໍ່ຄາດຫວັງບໍ່? ຖ້າແມ່ນ, ຈົ່ງອະທິຖານຂໍສະຕິປັນຍາແລະໃຫ້ມອງເຫັນພາບອັນໃຫຍ່ສິ່ງທີ່ພຣະອົງກຳລັງກະທຳໃນຊີວິດຂອງທ່ານ.
- **ຈົ່ງຄິດເບິ່ງຊີວິດທ່ານເອງ.** ມີບ່ອນໃດໃນຊີວິດຂອງທ່ານທີ່ທ່ານປະນີປະນອມຢູ່ແລະຍອມຮັບໂລກທີ່ໄຮ້ຄຸນຄ່າຕໍ່ພຣະຄັມພີ? ຈົ່ງອະທິຖານແລະຂໍພະລັງພຣະເຈົ້າເພື່ອໃຫ້ຮູ້ວ່າຈະເຮັດຢ່າງໃດກັບສະຖານະການນີ້.
- **ຈົ່ງເລົ່າເຣື່ອງຂອງທ່ານ.** ຈົ່ງເລົ່າໃຫ້ຄົນໃນຄອບຄົວຫຼືເພື່ອນລາຍລະອຽດທີ່ພຣະເຈົ້ານຳໄປສູ່ບ່ອນທີ່ບໍ່ຄາດຝັນຫຼືແມ້ກະທັ້ງບ່ອນທີ່ບໍ່ສະບາຍໃຈ, ໄປສູ່ໂອກາດ ຫຼື ໄປສູ່ສະຖານະການຕ່າງໆ, ແຕ່ພາຍລຸນມາທ່ານໄດ້ເຫັນພຣະຫັດພຣະເຈົ້າທຳງານຢູ່. ອະທິບາຍວ່າປະສົບການນີ້ກະທົບຕໍ່ຊີວິດແລະຄອບຄົວຂອງທ່ານ. ອະທິຖານກັບເຂົາແລະຂອບຄຸນພຣະເຈົ້າທີ່ໃຫ້ເຂົາເປັນພາກສ່ວນໃນການເດີນທາງຄວາມເຊື່ອກັບທ່ານ.

**ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ** https://ulsb.org/sunday-school-2/ **ແປໂດຍ PSI**